# ໂຮງຮຽນວັນອາທິດ
## ວັນອາທິດທີ 25 ຕຸລາ 2020 (10-25-2020)

---

## ຄຳໝັ້ນສັນຍາຂອງເຮົາຕໍ່ພຣະຄຣິດ

ແມ່ນຫຍັງຄືບາງສິ່ງທີ່ທ່ານມັກຫລາຍທີ່ໄດ້ຕັ້ງໃຈເຮັດ?

**ຈຸດສຳຄັນໃນບົດຮຽນ**: ຄຳໝັ້ນສັນຍາຕລອດຊີວິດຂອງທ່ານໃນຄວາມໄວ້ວາງໃຈແລະເຊື່ອຟັງພຣະຄຣິດ.

**ພຣະຄັມພີຕອບສນອງຕໍ່ຊີວິດ**:

ລາຍການ "ທີວີ ຄວາມເປັນຈິງ" Reality TV ເວລານີ້ໄດ້ຢູ່ຖ້າມກາງພວກເຮົາເປັນເວລາ 20 ປີແລ້ວ, ແລະພິຈາຣະນາເຫັນວ່າມີ 39 ເປີເຊັນຂອງຄົນອະເມຣິກັນເປີດເບິ່ງ, ຊຶ່ງບໍ່ມີແນວໂນ້ມວ່າຈະລ້າສມັຍໝົດໄປໃນໄວໆນີ້, ນຶ່ງໃນຄວາມນິຍົມໃນລາຍການ "ທີວີ ຄວາມເປັນຈິງ" ນີ້ ແມ່ນມີຜູ້ເຂົ້າແຂ່ງຂັນຜ່ານຜ່າຄວາມຍາກທີ່ທ້າທາຍ, ຊັບຊ້ອນ, ຜ່ານ ສນາມທີ່ມີອຸປະສັກເພື່ອຈະໄດ້ຮັບຕຳແໜ່ງເປັນ **"ອະເມຣິກັນ ນິນຈາ ວໍຣິເອີ"** American Ninja Warrior®, ນັ້ນກໍຈະແຈ້ງແລ້ວ ນັກກິລາເຫລົ່ານີ້ໄດ້ຮັບການຝຶກແອບຢ່າງໜັກໜ່ວງເປັນເວລາຫລາຍເດືອນ. ຊຶ່ງຄຳໝັ້ນສັນຍານັ້ນບໍ່ແມ່ນເລັກນ້ອຍ.

ພວກເຮົາອາດຈະແຂ່ງເອົາຕຳແໜ່ງປະເພດໃດ, ແຕ່ຊີວິດຂອງພວກເຮົາໄດ້ໝູນຮອບຄຳໝັ້ນສັນຍາຄືກັນ. ເບິ່ງແບບໄວໆໃນອາທິດນຶ່ງເຮົາຈະເຫັນຄຳໝັ້ນສັນຍາຂອງພວກເຮົາເອງແລະພວກເຮົາໄດ້ຕັ້ງໃຈໄວ້ແນວໃດຕໍ່ຄຳໝັ້ນສັນຍາເຫຼົ່ານັ້ນ! ຕໍ່ຄອບຄົວ, ຕໍ່ໝູ່ເພື່ອນ, ຕໍ່ວຽກງານ, ຕໍ່ການໃຫ້ກຽດ ຕໍ່ຄວາມຊຳນານໃໝ່, ຕໍ່ການຝຶກອາຊີບ, ແລະຕໍ່ການອອກກຳລັງກາຍຢູ່ໂຮງອອກກຳລັງກາຍ ທັງໝົດລ້ວນແຕ່ຮຽກຮ້ອງໃຫ້ເຮົາຮັກສາຄຳໝັ້ນສັນຍາໃນລະດັບສູງ. ແລະສິ່ງທີ່ກ່າວມາທັງໝົດຈະປະເຊີນກັບ "ອຸກປະສັກຂັດຂວາງ" ໃນການທ້າທາຍ.

ຄຳໝັ້ນສັນຍາຂອງພວກເຮົາເປີດເຜີຍເຖິງສິ່ງທີ່ພວກເຮົາຮັກ. ຄຳໝັ້ນສັນຍາຂອງພວກເຮົາຍັງເປີດເຜີຍເຖິງຜູ້ທີ່ພວກເຮົາຮັກ ນຳ, ໃນພຣະຄັມພີ, ພວກເຮົາໄດ້ອ່ານກ່ຽວກັບຄຳໝັ້ນສັນຍາ, ແລະໂດຍສະເພາະຄວາມຮັກຂອງພຣະເຈົ້າທີ່ມີຕໍ່ພວກເຮົາ. ພຣະອົງໃຫ້ຄຳຫມັ້ນສັນຍາຢ່າງເຕັມປ່ຽມກັບພວກເຮົາ. ຄຳຖາມທີ່ແທ້ຈິງແມ່ນ ເຮົາຈະຕອບສນອງຕໍ່ຄຳໝັ້ນສັນຍານັ້ນຢ່າງໃດ?

### ພຣະຄັມພີກ່າວວ່າແນວໃດ?

### 1. <u>ມາຣະໂກ 10:13-16</u>

*13 ແລະເຂົາໄດ້ອູ້ມເດັກນ້ອຍມາຫາພຣະອົງ ເພື່ອຈະໃຫ້ພຣະອົງຊົງຢຽດພຣະຫັດໃສ່ເຂົາ ແຕ່ພວກສາວົກໄດ້ຫ້າມປາມເຂົາໄວ້ 14 ເມື່ອພຣະເຢຊູຊົງເຫັນດັ່ງນັ້ນກໍເຄືອງພຣະທັຍ ຈຶ່ງຊົງກ່າວແກ່ພວກສາວົກວ່າ, "ຈົ່ງປ່ອຍໃຫ້ເດັກນ້ອຍເຂົ້າມາຫາເຮົາ ຢ່າຫ້າມເຂົາ ເພາະວ່າຣາຊແຜ່ນດິນຂອງພຣະເຈົ້າເປັນຂອງຄົນຢ່າງນີ້ແຫລະ 15 ເຮົາບອກທ່ານທັງຫລາຍຕາມຈິງວ່າ ຖ້າຜູ້ໃດບໍ່ຮັບຣາຊແຜ່ນດິນຂອງພຣະເຈົ້າເໝືອນດັ່ງເດັກນ້ອຍ ຜູ້ນັ້ນຈະເຂົ້າໃນຣາຊແຜ່ນດິນນັ້ນບໍ່ໄດ້ຈັກເທື່ອ" 16 ແລ້ວພຣະອົງຊົງອູ້ມເດັກນ້ອຍເຫລົ່ານັ້ນຢຽດພຣະຫັດໃສ່ ແລະອວຍພອນໃຫ້ເຂົາ.*

ໃນພຣະທັມຂ່າວປະເສີດມາຣະໂກ, ພຣະເຢຊູໄດ້ໃຫ້ພວກເຮົາເຫັນພາບທີ່ຊັດແຈ້ງຂອງຄຳໝັ້ນສັນຍາແລະການເຊື່ອຟັງພຣະອົງວ່າເປັນແນວໃດ. ພຣະອົງໄດ້ສັ່ງສອນແລະປິ່ນປົວ, ແລະປະຊາຊົນໄດ້ນຳລູກໆຂອງພວກເຂົາມາຫາພຣະອົງເພື່ອໃຫ້ພຣະອົງວາງມືແລະອວຍພອນໃຫ້ພວກເຂົາ. ພວກສາວົກຂອງພຣະອົງເຫັນແລ້ວກໍບໍ່ມັກ. ແທ້ຈິງແລ້ວ, ພວກສາວົກ "ໄດ້ຕິຕຽນພວກເຂົາ."

ເມື່ອທ່ານເບິ່ງເຫດການນີ້ຈາກທັດສະນະຂອງພວກສາວົກ, ຄຳຕຳໜິຂອງພວກເພິ່ນກໍເຫັນວ່າສົມເຫດຜົນ. ພຣະເຢຊູໄດ້ກະທຳສິ່ງທີ່ສຳຄັນແທ້ບໍ? ພຣະອົງກຳລັງສອນ, ປິ່ນປົວ, ແລະການກໍ່ສ້າງອານາຈັກຂອງພຣະເຈົ້າ ນີ້ແມ່ນການທຳງານທີ່ມີຜົນກະທົບອັນຕລອດໄປເປັນນິດ, ດັ່ງນັ້ນພຣະເຢຊູຈຶ່ງບໍ່ມີເວລາທີ່ຈະຫລິ້ນກັບເດັກນ້ອຍ.

ບໍ່ພຽງແຕ່ພວກສາວົກເປັນຜູ້ທີ່ຕຳໜິໃນມື້ນັ້ນ. ພຣະເຢຊູກໍເຮັດເຊັ່ນນັ້ນເໝືອນກັນ ແຕ່ພຣະອົງໄດ້ຍົກຣະດັບການຕຳໜິຢ່າງຮຸນແຮງຕໍ່ພວກສາວົກຂອງພຣະອົງ. ພຣະອົງຊົງຕຳໜິພວກສາວົກທີ່ຫ້າມປະຊາຊົນ. ໃນຄຳຕຳໜິຂອງພຣະອົງ, ພຣະອົງໄດ້ກ່າວສອງຖ້ອຍຄຳທີ່ໜ້າສົນໃຈ.

- "*ຈົ່ງປ່ອຍໃຫ້ເດັກນ້ອຍເຂົ້າມາຫາເຮົາ ຢ່າຫ້າມເຂົາ ເພາະວ່າຣາຊແຜ່ນດິນຂອງພຣະເຈົ້າເປັນຂອງຄົນຢ່າງນີ້ແຫລະ*" (ຂໍ້ທີ 14) ອານາຈັກຂອງພຣະເຈົ້າເປັນຂອງຜູ້ຄົນເປັນຄືກັບເດັກນ້ອຍເຫລົ່ານັ້ນ.

- "*ຖ້າຜູ້ໃດບໍ່ຮັບຣາຊແຜ່ນດິນຂອງພຣະເຈົ້າເໝືອນດັ່ງເດັກນ້ອຍ ຜູ້ນັ້ນຈະເຂົ້າໃນຣາຊແຜ່ນດິນນັ້ນບໍ່ໄດ້ຈັກເທື່ອ*" (ຂໍ້ທີ 15). ຖ້ອຍຄຳນີ້ຕ້ອງໄດ້ໂຍນພວກສາວົກອອກໄປເພາະວ່າການສລູບນັ້ນແມ່ນຜູ້ທີ່ໄດ້ຮຽນຮູ້ຫຼາຍທີ່ສຸດກ່ຽວສິ່ງທີ່ເປັນຂອງພຣະເຈົ້າຈຶ່ງຈະໄດ້ເຂົ້າໄປໃນຣາຊອານາຈັກຂອງພຣະອົງ. ເຖິງຢ່າງໃດກໍຕາມພຣະເຢຊູຊົງກ່າວວ່າຄົນທັງຫລາຍຕ້ອງເປັນ "ຄືກັບເດັກນ້ອຍ" ເພື່ອເຂົ້າໄປໃນຣາຊອານາຈັກ.

ເວັ້ນເສັຽແຕ່ວ່າພວກເຮົາຈະມາຫາພຣະເຈົ້າຄືກັບເດັກນ້ອຍທີ່ຍັງບໍ່ມີຄວາມກັງວົນໃຈກ່ຽວກັບໂລກນີ້ເທື່ອ, ພຽງແຕ່ຢາກຈະຢູ່ກັບພໍ່ແລະເຮັດໃຫ້ພໍ່ພໍໃຈ - ດັ່ງນັ້ນພວກເຮົາຈຶ່ງສາມາດເຂົ້າໄປໃນຣາຊອານາຈັກໄດ້. ການເຂົ້າໄປໃນຣາຊອານາຈັກຂອງພຣະເຈົ້າບໍ່ໄດ້ກ່ຽວຂ້ອງກັບ ຕຳແໜ່ງ, ອຳນາດ, ການສຶກສາ, ຫລືຖານະທາງສັງຄົມ; ການເຂົ້າໄປໃນຣາຊອານາຈັກຂອງພຣະອົງ ສິ່ງທີ່ຈະຕ້ອງເຮັດນັ້ນແມ່ນກ່ຽວກັບຫົວໃຈຂອງພວກເຮົາ. ທ່າທີທີ່ພວກເຮົາຕ້ອງການແມ່ນທ່າທີທີ່ຊື່ນຊົມຍິນດີ, ທ່າທີເໝືອນກັບເດັກນ້ອຍ.

## 2. <u>ມາຣະໂກ 10:17-20</u>

*17 ເມື່ອພຣະອົງສະເດັດອອກໄປກາງທາງ ມີຄົນນຶ່ງແລ່ນມາຫາພຣະອົງຄຸເຂົ່າລົງທູນຖາມພຣະອົງວ່າ, "ພຣະອາຈານຜູ້ປະເສີດເອີຍ, ຂ້ານ້ອຍຈະຕ້ອງເຮັດແນວໃດຈຶ່ງຈະໄດ້ຮັບຊີວິດອັນຕລອດໄປເປັນນິດມາເປັນມໍຣະດົກ" 18 ພຣະເຢຊູຊົງຕອບວ່າ, "ເປັນຫຍັງທ່ານຈຶ່ງເອີ້ນເຮົາວ່າຜູ້ປະເສີດ ບໍ່ມີໃຜປະເສີດ ເວັ້ນແຕ່ພຣະເຈົ້າອົງດຽວເທົ່ານັ້ນ 19 ທ່ານຮູ້ຈັກຂໍ້ບັນຍັດແລ້ວວ່າ ຢ່າຂ້າຄົນ ຢ່າມິດສາຈານຈາກຜົວຈາກເມັຽ ຢ່າລັກຊັບ ຢ່າເປັນພຍານບໍ່ຈິງ ຢ່າສໍ້ໂກງ ຈົ່ງນັບຖືບິດາມານດາຂອງຕົນ" 20 ຄົນນັ້ນໄດ້ທູນຕອບວ່າ, "ອາຈານເອີຍ, ຂໍ້ເຫລົ່ານັ້ນຂ້ານ້ອຍໄດ້ຮັກສາໄວ້ຕັ້ງແຕ່ເປັນເດັກນ້ອຍມາ"*

ໃນທັນທີທີ່ໄດ້ຕິດຕາມເຣື່ອງລາວຂອງເດັກນ້ອຍ, ມາຣະໂກໄດ້ໂຍງໃສ່ອີກເຫດການນຶ່ງເພື່ອຊ່ວຍເຮົາໃຫ້ເຫັນວ່າການເຊື່ອຟັງພຣະຄຣິດຢ່າງແທ້ຈິງຄືແນວໃດ. ເຣື່ອງນີ້ຄວນຈະເຮັດໃຫ້ແມ່ນແຕ່ຜູ້ຕິດຕາມພຣະຄຣິດທີ່ກະຕືລືລົ້ນທີ່ສຸດທ່າມກາງພວກເຮົາຢຸດແລະປະເມີນເບິ່ງຫົວໃຈແລະຄວາມສັມພັນກັບພຣະເຈົ້າ. ການປະເຊີນໜ້າຄັ້ງນີ້ແມ່ນກ່ຽວຂ້ອງກັບຊາຍຄົນນຶ່ງທີ່ຮັ່ງມີ (ມາຣະໂກ 10: 22); ຜູ້ຂຽນຂ່າວປະເສີດຄົນອື່ນໄດ້ລະຍາຍວ່າລາວເປັນຄົນໜຸ່ມ (ມັດທາຍ 19: 20) ແລະເປັນຜູ້ປົກຄອງ (ລູກາ 18:18).

ຄຳຖາມຂອງລາວແມ່ນຄຳຖາມທົ່ວໄປ, ແມ່ນແຕ່ທ່ານອາດເຄີຍຖາມໃນບາງເວລາວ່າ: "ຂ້ານ້ອຍຕ້ອງເຮັດແນວໃດຈຶ່ງຈະໄດ້ຊີວິດອັນຕລອດໄປເປັນມໍຣະດົກ?" ຊາຍໜຸ່ມຄົນນີ້ພະຍາຍາມຈະເດີນທາງໄປສວັນໂດຍການສ້າງຄວາມດີ. ຂ້າ ພະເຈົ້າເຫັນພາບທີ່ລາວຢືນຢູ່ຂ້າງພຣະເຢຊູແລະພວກສາວົກ, ມີເຄື່ອງຂຽນຢູ່ໃນມື, ລໍຖ້າຄຳຕອບອັນເລິກເຊິ່ງຂອງພຣະເຢຊູ. ລາວຕຽມພ້ອມແລ້ວສຳລັບລາຍຊື່ "ສິ່ງທີ່ຕ້ອງເຮັດ ເພື່ອໄປສວັນ" ຂອງລາວ.

ບັນຫາເກີດຂຶ້ນເມື່ອພວກເຮົາຄິດວ່າພວກເຮົາສາມາດເປັນຄົນດີພໍທີ່ຈະໄດ້ຢືນຢູ່ຢ່າງຖືກຕ້ອງກັບພຣະເຈົ້າ. ພວກເຮົາອາສາສມັກທີ່ຈະ ສະລະເວລາ, ຊັບພະຍາກອນ, ແລະພລັງງານຂອງພວກເຮົາຕໍ່ອົງການຈັດຕັ້ງທີ່ມີຊື່ສຽງ. ໂດຍລວມແລ້ວ, ພວກເຮົາແມ່ນຄົນດີ. ແຕ່ພວກເຮົາຜິດພາດຢ່າງໜ້າເສົ້າໃຈຖ້າຫາກພວກເຮົາເຮັດສິ່ງເຫລົ່ານີ້ຕາມແບບແຜນຂອງພວກເຮົາເອງຄືລາຍຊື່ "ສິ່ງທີ່ຕ້ອງເຮັດ ເພື່ອໄປສວັນ". "ບໍ່ແມ່ນສິ່ງເຫຼົ່ານີ້ບໍ່ດີ, ແຕ່ບໍ່ແມ່ນສິ່ງທີ່ເປັນຄຳຕອບຕໍ່ຄຳຖາມຂອງຜູ້ຊາຍຄົນນັ້ນວ່າ: "ຂ້ານ້ອຍຕ້ອງເຮັດແນວໃດຈຶ່ງ ຈະໄດ້ຊີວິດອັນຕລອດໄປເປັນມໍຣະດົກ?

ພຣະເຢຊູໃຫ້ລາຍການກວດສອບແກ່ຊາຍໜຸ່ມຄົນນັ້ນທີ່ລາວສແວງຫາ ໂດຍຊີ້ໃຫ້ເຫັນວ່າລາວຮູ້ຢູ່ແລ້ວວ່າພຣະບັນຍັດກ່າວໄວ້ແນວໃດ:

- ຢ່າຂ້າຄົນ.
- ຢ່າຫລິ້ນຊູ້.
- ຢ່າລັກ.
- ຢ່າຕົວະ.
- ໃຫ້ກຽດພໍ່ແມ່.

ພຣະເຢຊູຊົງໃຊ້ຄຳສັ່ງສະເພາະເຫຼົ່ານີ້ ເພາະວ່າຜູ້ຊາຍຊາວຢິວຄົນນີ້ໄດ້ຄຸ້ນເຄີຍດີກັບຂໍ້ບັນຍັດເຫລົ່ານີ້ຊຶ່ງຢູ່ໃນພຣະບັນ ຍັດສິບປະການ, ພຣະບັນຍັດເຫລົ່ານີ້ກໍມີສ່ວນກ່ຽວຂ້ອງກັບຄົນອື່ນໆ ນຳ. ເມື່ອເວົ້າເຖິງພຶດຕິກັມພາຍນອກ, ຊາຍຄົນນັ້ນໄດ້ເຮັດດີແລ້ວ. ຊາຍໜຸ່ມຄົນນັ້ນອາດຄິດຕໍ່ຕົນເອງວ່າ, "ຫວານດີ! ຂ້ອຍໄດ້ເຮັດສິ່ງທັງໝົດເຫຼົ່ານັ້ນຕັ້ງແຕ່ຂ້ອຍຍັງເປັນເດັກນ້ອຍ! ຂ້ອຍໄດ້ເຮັດສິ່ງນີ້ແລ້ວ. ຂ້ອຍໄປຢູ່ສວັນໄດ້!"

ເປັນຄວາມຈິງທີ່ວ່າການກະທຳຂອງຜູ້ຊາຍຄົນນີ້ໄດ້ສະແດງໃຫ້ເຫັນເຖິງລະດັບໃດນຶ່ງໃນການກະທຳ. ພວກເຮົາກໍສະແດງຄຳໝັ້ນສັນຍາຂອງພວກເຮົາໃນຂະນະທີ່ພວກເຮົາພະຍາຍາມທີ່ຈະເຊື່ອຟັງ, ແຕ່ຊາຍໜຸ່ມຄົນນີ້ສະແດງໃຫ້ເຫັນພຽງແຕ່ບາງສ່ວນຄຳໝັ້ນສັນຍາ. ນັ້ນອາດຟັງເບິ່ງຄືວ່າຜິດໄປຈາກຄຳກ່າວອ້າງຂອງຜູ້ຊາຍຄົນນີ້ທີ່ວ່າ: “ຂ້ານ້ອຍໄດ້ຮັກສາທຸກສິ່ງເຫລົ່ານີ້ມາຕັ້ງແຕ່ຂ້ານ້ອຍຍັງໜຸ່ມ" (ຂໍ້ທີ 20), ແຕ່ຂໍ້ຈຳກັດຂອງການເຊື່ອຟັງຂອງລາວກຳລັງຈະຖືກເປີດເຜີຍ. ພຣະເຢຊູກຳລັງຈະຖິ້ມລະເບີດໃສ່(ເຈາະເລິກ)ແນວຄິດຂອງຊາຍຄົນນີ້.

## 3. <u>ມາຣະໂກ 10:21-22</u>

*21 ພຣະເຢຊູເພ່ງເບິ່ງຜູ້ນັ້ນກໍຊົງຮັກທ່ານແລ້ວ ຊົງກ່າວວ່າ, “ທ່ານຍັງຂາດຢູ່ສິ່ງນຶ່ງ ຄືຈົ່ງໄປຂາຍບັນດາສິ່ງຂອງຊຶ່ງທ່ານມີຢູ່ແຈກທານແກ່ຄົນອະນາຖາ ແລ້ວທ່ານຈະມີຊັບສົມບັດໃນສວັນ ແລະຈົ່ງຕາມເຮົາມາເສັຽ” 22 ເມື່ອໄດ້ຍິນຄຳນັ້ນໜ້າຂອງທ່ານກໍເສົ້າລົງ ຄົນນັ້ນກໍອອກໄປເປັນທຸກໜັກໃຈເພາະຕົນມີຊັບສິ່ງຂອງຈຳນວນຫລາຍ*

ພຣະເຢຊູສເນີຄວາມຕ້ອງການຢ່າງໃຫຍ່ຫຼວງຈາກຊາຍໜຸ່ມຄົນນັ້ນ. ພຣະອົງກ່າວໃນເຣື່ອງສຳຄັນວ່າ,"ຖືກຕ້ອງ, ທ່ານໄດ້ເຮັດຂ້ອນຂ້າງດີແລ້ວ, ແຕ່ທ່ານຍັງຂາດຢູ່ສິ່ງນຶ່ງ. ທ່ານຍັງຮັກເງິນຢູ່. ຈົ່ງເອົາເງິນທັງໝົດຂອງທ່ານແຈກຢາຍແກ່ຄົນທຸກຍາກ, ແລ້ວຈຶ່ງຕິດຕາມເຮົາມາ. "ຟັງແລ້ວຄືສົມເຫດຜົນດີ, ແຕ່ບໍ່ແມ່ນຄຳເວົ້າທີ່ຄອບຄຸມ ເຮົາທຸກຄົນຖືກຮຽກເອີ້ນໃຫ້ຕິດຕາມພຣອົງ.

ການສະລະຊັບສິນຂອງພວກເຮົາບໍ່ແມ່ນຈຸດສຳຄັນຂອງເຣື່ອງນີ້. ພຣະທັມຂ່າວປະເສີດບໍ່ໄດ້ບັນທຶກວ່າມີເວລາອື່ນໆທີ່ພຣະເຢຊູເອີ້ນຜູ້ໃດຜູ້ນຶ່ງໃຫ້ເຮັດເຊັ່ນນັ້ນ. ໃນການຕິດຕາມພຣະເຢຊູ, ຊັກຂາຍຍອມສົ່ງຄືນໃຫ້ແກ່ຄົນຍາກຈົນເຄິ່ງນຶ່ງ ແລະລາວຍອມສົ່ງຄືນສີ່ຕໍ່ໃຫ້ຜູ້ທີ່ລາວໄດ້ສໍ້ໂກງ(ລູກາ 19:1-10). ໃນຄຳອຸປະມາເຣື່ອງເງິນມະນາ, ພຣະເຢຊູຊົງເອີ້ນພວກເຮົາໃຫ້ນຳໃຊ້ສິ່ງທີ່ພວກເຮົາມີຢ່າງສລາດສຳລັບອານາຈັກຂອງພຣະອົງ (ຂໍ້.11-27). ສະນັ້ນເປັນຫຍັງພຣະເຢຊູຈຶ່ງຮຽກຮ້ອງຈາກຜູ້ຊາຍຄົນນັ້ນຢ່າງຮຸນແຮງ? ພຣະເຢຊູຮູ້ວ່າຊາຍຄົນນັ້ນຮັກຊັບສົມບັດຂອງຕົນຫລາຍກວ່າຮັກພຣະອົງ. ພຣະເຢຊູຮູ້ວ່າໃນຕອນແລງຂອງມື້ນັ້ນ, ເງິນໄດ້ນັ່ງຢູ່ເທິງບັນລັງຂອງຫົວໃຈຂອງຊາຍໜຸ່ມ, ບໍ່ແມ່ນພຣະເຈົ້າ. ດັ່ງນັ້ນພຣະເຢຊູເບິ່ງການເຊື່ອຟັງຂອງລາວຢ່າງເຜີນໆ ແລະມຸ້ງຕົງໄປຫາສິ່ງນຶ່ງທີ່ຊາຍຄົນນັ້ນຮັກຫຼາຍກວ່າສິ່ງໃດໆ ທັງໝົດ.

ຢ່າໃຫ້ພວກເຮົາພາດໄປຈາກການຮຽກຮ້ອງທີ່ຮຸນແຮງຊຶ່ງເກີດຂຶ້ນກ່ອນໜ້ານັ້ນ. "ພຣະເຢຊູເພ່ງເບິ່ງລາວ, ພຣະອົງຊົງຮັກລາວ." ຊາຍໜຸ່ມຄົນນັ້ນຕ້ອງການຊີວິດອັນຕລອດໄປ, ແລະພຣະເຢຊູກໍຕ້ອງການໃຫ້ລາວໄດ້ຊີວິດນັ້ນ. ຜູ້ຊາຍຄົນນັ້ນຢາກຮັ່ງມີ, ຢາກມີຊີວິດທີ່ຄົບບໍຣິບູນ, ແລະພຣະເຢຊູກໍຢາກໃຫ້ລາວໄດ້ສິ່ງເຫລົ່ານັ້ນ ເຊັ່ນກັນ. ພຣະເຢຊູຮັກລາວແລະຕ້ອງການໃຫ້ສິ່ງທີ່ດີທີ່ສຸດແກ່ລາວ, ແຕ່ພຣະເຢຊູຮູ້ວ່າເສັ້ນທາງໄປສູ່ຄວາມປາຖນາທັງສອງນັ້ນແມ່ນຢູ່ໃນ "ຄຳໝັ້ນສັນຍາ" ທັງໝົດທີ່ມີຕໍ່ພຣະອົງ.

ຊາຍໜຸ່ມໄດ້ຍິນຄຳຕອບຕໍ່ຄຳຖາມຂອງລາວ, ແຕ່ມັນບໍ່ແມ່ນຄຳຕອບທີ່ລາວຕ້ອງການຫຼືຄາດຫວັງ. ຊາຍຄົນນັ້ນເວົ້າດ້ວຍປາກຂອງລາວວ່າລາວຕ້ອງການຊີວິດອັນຕລອດໄປ ແຕ່ລາວບໍ່ເຕັມໃຈທີ່ຈະເຮັດສິ່ງດຽວທີ່ພຣະເຢຊູກ່າວວ່າລາວຈຳເປັນຕ້ອງເຮັດ. ລາວຮັກເງິນຂອງລາວຫຼາຍກວ່າລາວຮັກພຣະເຢຊູ. ລາວຕ້ອງການສິ່ງທີ່ພຣະເຢຊູຈະມອບໃຫ້ຫຼາຍກວ່າສິ່ງທີ່ລາວຕ້ອງການມີຄວາມສັມພັນກັບພຣະເຢຊູ.

ເປັນເຣື່ອງທີ່ຍາກຫລາຍທີ່ຈະເອົາສິ່ງທີ່ເປັນຂອງໂລກເຊັ່ນ "ເງິນ" ອອກຈາກບັນລັງຂອງຫົວໃຈຂອງເຮົາ, ເວັ້ນເສັຽແຕ່ວ່າໃຫ້ພຣະເຢຊູເປັນຜູ້ທຳອິດນັ່ງເທິງບັນລັງນັ້ນ, ພວກເຮົາບໍ່ສາມາດເຂົ້າໄປໃນອານາຈັກສວັນໄດ້ຢ່າງງ່າຍດາຍ. ພຣະເຈົ້າຢາກໄດ້ຫົວໃຈຂອງພວກເຮົາ ທັງໝົດຂອງຫົວໃຈຂອງພວກເຮົາ. ຫົວໃຈທີ່ມຸ້ງໝັ້ນບໍ່ໃຫ້ພວກເຮົາເຂົ້າໄປໃນອານາຈັກຂອງພຣະເຈົ້າ. ກົງກັນຂ້າມ, ຫົວໃຈທີ່ມຸ່ງໝັ້ນ ເປັນຫຼັກຖານວ່າພວກເຮົາໄດ້ຮັບອະນຸຍາດແລ້ວທີ່ຈະເຂົ້າໄປໃນອານາຈັກຂອງພຣະເຈົ້າ.

## ນຳໃຊ້ໃນຊີວິດ

ທ່ານຈະສະແດງຄຳໝັ້ນສັນຍາຂອງທ່ານຕໍ່ພຣະຄຣິດໃນອາທິດນີ້ແນວໃດ? ພິຈາຣະນາເບິ່ງການນຳໃຊ້ດັ່ງຕໍ່ໄປນີ້:

➢ **ຄວາມໄວ້ວາງໃຈ.** ຖ້າທ່ານໄດ້ພະຍາຍາມທີ່ຈະເປັນຄົນດີແລະມີສິນທັມເພື່ອຈະໄດ້ເປັນຜູ້ເໝາະສົມກັບພຣະເຈົ້າ, ຈົ່ງຮັບຮູ້ຄວາມໄຮ້ປໂຍດຂອງສິ່ງນັ້ນນຳ. ເຊື່ອວາງໃຈໃນພຣະຄຣິດແລະເຊື່ອຟັງພຣະຄຳຂອງພຣະອົງເພື່ອເປັນການຕອບຮັບພຣະຄຸນຂອງພຣະອົງໃນຊີວິດຂອງທ່ານ.

➢ **ກວດກາ.** ຄືກັບຜູ້ປົກຄອງໜຸ່ມທີ່ຮັ່ງມີ ຈົ່ງກວດເບິ່ງຫົວໃຈຂອງທ່ານແລະເພື່ອຈະເບິ່ງວ່າ, ທ່ານມີບາງສິ່ງທີ່ນັ່ງຢູ່ເທິງບັນລັງຫົວໃຈຂອງທ່ານຫລືບໍ່ ນອກເໜືອຈາກອົງພຣະຄຣິດ. ບາງທີອາດຈະແມ່ນເງິນ, ອຳນາດ, ຄວາມສະບາຍ, ການຄວບຄຸມ, ຄວາມປອດພັຍ, ການເຫັນດີ, ຫລືການຮັບຮູ້. ທູນຂໍໃຫ້ພຣະອົງເປີດເຜີຍສິ່ງເຫລົ່ານັ້ນກັບທ່ານ ແລະມອບບ່ອນທີ່ເໝາະສົມໃຫ້ພຣະອົງນັ່ງຢູ່ເທິງບັນລັງຊີວິດຂອງທ່ານ.

➢ **ຟື້ນຟູໃໝ່.** ຖ້າທ່ານໄດ້ສູນເສັຽຄວາມຮັກຄັ້ງທຳອິດຂອງທ່ານຕໍ່ພຣະຄຣິດ ແລະບໍ່ມາຫາພຣະອົງໃນແຕ່ລະມື້ຄືກັບເດັກນ້ອຍ, ຈົ່ງສ້າງຄວາມສັມພັນຄືນໃໝ່ກັບພຣະອົງ. ຈົດບັນທຶກວິທີຫລືສິ່ງທີ່ກີດຂວາງທ່ານຈາກຄວາມເຊື່ອໃນພຣະເຈົ້າທີ່ຄ້າຍຄືກັບເດັກນ້ອຍ ທູນຂໍໃຫ້ພຣະອົງຊ່ວຍທ່ານໃຫ້ກັບຄືນມາສູ່ບ່ອນເກົ່ານັ້ນອີກ.

ພວກເຮົາຢາກເຫັນຄົນປະສົບຜົນສຳເຣັດຍ້ອນຄຳໝັ້ນສັນຍາທີ່ຈະເຮັດບາງສິ່ງ. ຈົ່ງຈື່ໄວ້ວ່າ, ທຳອິດພຣະເຈົ້າຊົງໃຫ້ຄຳໝັ້ນສັນຍາກັບເຮົາ. ແລະຍ້ອນຄຳໝັ້ນສັນຍາກັບພວກເຮົານັ້ນ ພວກເຮົາສາມາດຕອບສນອງຕໍ່ພຣະອົງໃນພລັງແລະຣິດອຳນາດຂອງພຣະອົງ.

**ອຸປຖັມໂດຍລາວຊາວເທີນບັບຕິດສັມພັນ www.lsbf.org**